ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ກະຊວງ ອຸດສາຫະກຳ ແລະ ການຄ້າ

ເລກທີ 0239 /ອຄ.ກຂອ

ນະຄອນຫຼວງວຽງຈັນ, ວັນທີ 0 8 FEB 2011

# ຂໍ້ຕົກລົງ

## ວ່າດ້ວຍການປະກາດໃຊ້ລະບຽບແຫຼ່ງກຳເນີດສິນຄ້າ ພາຍໃຕ້ສັນຍາການຄ້າເສລີລະຫວ່າງ ອາຊຽນ - ອິນເດຍ

- ອີງຕາມສັນຍາການຄ້າດ້ານສິນຄ້າພາຍໃຕ້ສັນຍາການຄ້າເສລີລະຫວ່າງອາຊຽນ- ອິນເດຍທີ່ໄດ້ຮັບການລົງນາມໃນວັນທີ 13 ສິງຫາ 2009.
- ອີງຕາມມະຕິຕົກລົງຂອງ ຄະນະປະຈຳສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 91/ຄປຈ, ລົງວັນທີ 2 ກັນຍາ 2010 ວ່າດ້ວຍການຕົກລົງໃຫ້ສັດຕະຍາບັນແກ່ສັນຍາການຄ້າດ້ານຜະລິດຕະພັນ ພາຍໃຕ້ສັນຍາການຄ້າເສລີ ລະຫວ່າງ ອາຊຽນ - ອິນເດຍ.
- ອີງຕາມສານແຈ້ງສັດຕະຍາບັນ ສະບັບລົງວັນທີ 22 ຕຸລາ 2010 ຂອງລັດຖະມົນຕີກະຊວງການຕ່າງປະເທດ ແຈ້ງຕໍ່ປະເທດພາຄີຂອງສັນຍາ.
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 188/ນຍ, ລົງວັນທີ 17 ສິງຫາ 2006 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງອຸດສາຫະກຳ ແລະ ການຄ້າ.
- ອີງຕາມການສະເໜີຂອງ ກົມການນຳເຂົ້າ ແລະ ສົ່ງອອກ.

ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ ຕົກລົງ:

1. ປະກາດນຳໃຊ້ລະບຽບແຫຼ່ງກຳເນີດສິນຄ້າ (Rules of Origin ຫຼື ROO) ພາຍໃຕ້ສັນ ຍາການຄ້າເສລີລະຫວ່າງອາຊຽນ - ອິນເດຍ ເຊິ່ງໃນນັ້ນລວມທັງລະບຽບຂັ້ນຕອນ ການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (Operational Certification Procedures ຫຼື OCP) ແລະລະບຽບແຫຼ່ງກຳເນີດສະເພາະຜະລິດຕະພັນ (Product Specific Rules).

2. ສິນຄ້າມີສິດໄດ້ຮັບໃບຢັ້ງຢືນແຫລ່ງກຳເນີດສິນຄ້າ Form AI ແມ່ນສິນຄ້າທີ່ມີແຫລ່ງກຳເນີດໃນອາຊຽນ - ອິນເດຍ ແລະຜ່ານຂະບວນການຜະລິດຢ່າງຖືກຕ້ອງຕາມລະບຽບແຫລ່ງກຳເນີດສິນຄ້າພາຍໃຕ້ສັນຍາການຄ້າເສລີ ລະຫວ່າງ ອາຊຽນ - ອິນເດຍ.

3. ມອບໃຫ້ກົມການນຳເຂົ້າ ແລະສົ່ງອອກ (ພະແນກຄຸ້ມຄອງແຫລ່ງກຳເນີດສິນຄ້າ), ພະແນກອຸດສາ ຫະກຳ ແລະການຄ້ານະຄອນຫລວງ ແລະພະແນກອຸດສາຫະກຳ ແລະການຄ້າແຂວງໃນທົ່ວປະເທດມີສິດອອກໃບຢັ້ງຢືນແຫລ່ງກຳເນີດສິນຄ້າທີ່ໄດ້ສິດພິເສດພາຍໃຕ້ສັນຍາທີ່ກ່າວໄວ້ໃນວັກ 1 ຂ້າງເທິງ.

4. ຜູ້ຜະລິດ ແລະ ຜູ້ສົ່ງອອກທີ່ຂຶ້ນທະບຽນວິສາຫະກິດຢ່າງຖືກຕ້ອງຕາມກົດໝາຍ ວ່າດ້ວຍວິສາຫະກິດ ຫາກຕ້ອງການໃບຢັ້ງຢືນແຫລ່ງກຳເນີດສິນຄ້າ Form AI ເພື່ອນຳໃຊ້ສິດພິເສດທາງການຄ້າ ສາມາດຍື່ນຄຳຮ້ອງຕາມແບບຟອມທີ່ໄດ້ກຳນົດໄວ້ ຕໍ່ເຈົ້າໜ້າທີ່ກ່ຽວຂ້ອງ ທີ່ກ່າວໄວ້ໃນວັກ 2 ຂ້າງເທິງ.

5. ມອບໃຫ້ກົມການນຳເຂົ້າ ແລະສົ່ງອອກ ຮ່າງບົດແນະນຳທາງດ້ານວິຊາການຕາມສິດ ແລະໜ້າທີ່ ຂອງຕົນເພື່ອຈັດຕັ້ງປະຕິບັດລະບຽບແຫລ່ງກຳເນີດສິນຄ້າພາຍໃຕ້ສັນຍາທີ່ກ່າວຂ້າງເທິງຢ່າງມີປະສິດທິຜົນ.

6. ຂໍ້ຕົກລົງສະບັບນີ້ ມີຜົນບັງຄັບໃຊ້ຢ້ອນຫຼັງນັບແຕ່ວັນທີ 1 ມັງກອນ 2011 ເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ,

ດຣ. ນາມ ວິຍະເກດ